# ແຜນບໍລິຫານການເລືອກຕັ້ງ ຂອງ ເມືອງ FRESNO
# ການດັດແກ້ຄັ້ງທຳອິດ
# ເດືອນສິງຫາ 2020

**ຄຳນຳ:** ແຜນບໍລິຫານການເລືອກຕັ້ງຂອງເມືອງ Fresno ສ້າງຕັ້ງຂຶ້ນໃນເດືອນພະຈິກ 2019. ແຜນການດັ່ງກ່າວໄດ້ຖືກນຳໃຊ້ເພື່ອດຳເນີນການເລືອກຕັ້ງປະທານາທິບໍດີຄັ້ງທຳອິດໃນເດືອນມີນາ 2020. ການດັດແກ້ຄັ້ງທຳອິດນີ້ຈຳເປັນຕ້ອງປັບປຸງແຜນເນື່ອງຈາກວ່າມັນກ່ຽວຂ້ອງກັບການເລືອກຕັ້ງປະທານາທິບໍດີໃນເດືອນພະຈິກ 2020 ທີ່ຈະມາເຖິງນີ້. ໂດຍທົ່ວໄປແລ້ວ ການປ່ຽນແປງແຜນການແມ່ນກ່ຽວຂ້ອງກັບການແຜ່ລະບາດຂອງພະຍາດ COVID-19 ເຊິ່ງເຮັດໃຫ້ເກີດມີການປ່ຽນແປງທົ່ວລັດຕໍ່ກັບຂັ້ນຕອນການເລືອກຕັ້ງ. ການປ່ຽນແປງແຜນການໄດ້ລະບຸໄວ້ທີ່ນີ້:

A. ພາສາ: ກ່ອນໜ້ານີ້, ເມືອງ Fresno ຈຳເປັນຕ້ອງໄດ້ສົ່ງຂໍ້ມູນ ແລະ ຂໍ້ມູນກ່ຽວກັບຜູ້ມີສິດລົງຄະແນນສຽງຕ້ອງໄດ້ແປເປັນພາສາສະເປນ, ພາສາປັນຈາບີ, ພາສາມົ້ງ, ພາສາຈີນ, ພາສາເກົາຫຼີ, ພາສາຂະເໝນ, ພາສາຫວຽດນາມ ແລະ ພາສາຕາກາລັອກ. ພາສາລາວໄດ້ຖືກເພີ່ມເຂົ້າໃນລາຍການຂອງພາສາສຳລັບເມືອງ Fresno. ລາຍການຂອງພາສາຕ່າງໆໃນແຜນການປະຈຸບັນແມ່ນຈະປະກອບມີພາສາຢູ່ນຳ.

B. ສູນປ່ອນບັດລົງຄະແນນສຽງເລືອກຕັ້ງ: ທຸກສູນປ່ອນບັດລົງຄະແນນສຽງເລືອກຕັ້ງຈະເປີດບໍລິການເປັນເວລາສີ່ວັນ, ເລີ່ມຕັ້ງແຕ່ວັນທີ 31 ຕຸລາ[st] ຮອດວັນທີ 3 ພະຈິກ[rd]. ຈະບໍ່ມີສູນປ່ອນບັດລົງຄະແນນສຽງເລືອກຕັ້ງໃດເປີດໃຫ້ບໍລິການເປັນເວລາ 11 ວັນ. ເມື່ອໃດກໍຕາມທີ່ມີຄວາມເປັນໄປໄດ້, ສະຖານທີ່ຂອງສູນປ່ອນບັດເລືອກຕັ້ງທີ່ໃຊ້ໃນເດືອນມີນາ 2020 ແມ່ນຈະໄດ້ນຳໃຊ້ຄືນອີກ. ບາງສະຖານທີ່ແມ່ນບໍ່ສາມາດນຳໃຊ້ໄດ້ ແລະ ບາງສະຖານທີ່ນ້ອຍເກີນໄປທີ່ຈະຊ່ວຍໃຫ້ມີໄລຍະຫ່າງທາງສັງຄົມທີ່ຈຳເປັນ. ຄາດວ່າຈະມີການປ່ຽນແປງປະມານ 10 ແຫ່ງ. ທາງເມືອງຈະໃຊ້ສະຖານທີ່ປ່ຽນແທນໃນບໍລິເວນທົ່ວໄປເຂດດຽວກັນເມື່ອມີຄວາມເປັນໄປໄດ້. ລາຍການໃໝ່ຂອງທີ່ຕັ້ງສູນປ່ອນບັດລົງຄະແນນສຽງເລືອກຕັ້ງຈະມີຢູ່ໃນເວັບໄຊທ໌ ແລະ

ສົ່ງທາງໄປສະນີໃຫ້ຜູ້ມີສິດລົງຄະແນນສຽງທຸກທ່ານໃນປຶ້ມຄູ່ມືຂໍ້ມູນກ່ຽວກັບຜູ້ມີສິດລົງຄະແນນສຽງຂອງເມືອງ.

C. ພະຍາດ COVID-19:
ຂໍ້ຄວນລະວັງທີ່ຈະຕ້ອງໄດ້ປະຕິບັດຢູ່ສູນປ່ອນບັດລົງຄະແນນສຽງເລືອກຕັ້ງທຸກສູນ ເພື່ອສ້າງສະພາບແວດລ້ອມໃຫ້ມີຄວາມປອດໄພໃຫ້ແກ່ພະນັກງານ ແລະ ຜູ້ມີສິດລົງຄະແນນສຽງ. ອຸປະກອນປ່ອນບັດລົງຄະແນນສຽງເລືອກຕັ້ງຈະຕ້ອງໄດ້ຕັ້ງໄວ້ ເພື່ອສົ່ງເສີມການເວັ້ນໄລຍະຫ່າງທາງສັງຄົມ. ຜູ້ມີສິດລົງຄະແນນສຽງຈະຖືກບອກໃຫ້ລໍຖ້າເປັນແຖວຫ່າງກັນຫົກຟຸດ ເຊິ່ງອາດຈະໝາຍເຖິງວ່າຜູ້ມີສິດລົງຄະແນນສຽງຈະຕ້ອງໄດ້ຖ້າຢູ່ດ້ານນອກຂອງສູນປ່ອນບັດລົງຄະແນນສຽງເລືອກຕັ້ງຖ້າຈຳເປັນ. ເຄື່ອງປ້ອງກັນແຜ່ນແກ້ວທົນຄວາມຮ້ອນ ແລະ ໜ້າຈໍດຶງຂຶ້ນຈະຈັດວາງໄວ້ຢູ່ບ່ອນເຮັດວຽກ ເພື່ອແຍກພະນັກງານ ແລະ ຜູ້ມີສິດລົງຄະແນນສຽງ. ພະນັກງານທຸກຄົນຈະຕ້ອງໃສ່ຜ້າປິດໜ້າ ຫຼື ເຄື່ອງປ້ອງກັນ. ຜູ້ມີສິດລົງຄະແນນສຽງຈະຖືກບອກໃຫ້ໃສ່ຜ້າປິດໜ້າ ແລະ ຜ້າປິດໜ້າຈະໄດ້ກຽມໄວ້ໃຫ້ຜູ້ມີສິດລົງຄະແນນສຽງທີ່ບໍ່ມີ. ເຄື່ອງອຸປະກອນຈະຕ້ອງໄດ້ອະນາໄມເປັນປົກກະຕິ. ນ້ຳຢາລ້າງມືຈະຕ້ອງໄດ້ຈັດກຽມໄວ້ໃຫ້ຜູ້ມີສິດລົງຄະແນນສຽງທີ່ເຂົ້າ ແລະ ອອກສູນປ່ອນບັດລົງຄະແນນສຽງເລືອກຕັ້ງ. ເມື່ອໃດກໍຕາມທີ່ມີຄວາມເປັນໄປໄດ້, ປະຕູຈະຕ້ອງໄດ້ເປີດໄວ້ ເພື່ອລະບາຍອາກາດ.

D. ຕູ້ປ່ອນບັດລົງຄະແນນສຽງເລືອກຕັ້ງ:
ຕູ້ປ່ອນບັດລົງຄະແນນສຽງເລືອກຕັ້ງເພີ່ມແມ່ນຈະຈັດເພີ່ມໃສ່ໃຫ້ທົ່ວເມືອງ. ເມືອງ Fresno ຕ້ອງມີຕູ້ປ່ອນບັດລົງຄະແນນສຽງເລືອກຕັ້ງ 32 ຕູ້. ນອກຈາກທີ່ຕັ້ງຂອງຕູ້ປ່ອນບັດລົງຄະແນນສຽງເລືອກຕັ້ງ 43 ແຫ່ງທີ່ໃຊ້ໃນເດືອນມີນາ 2020 ຜ່ານມາແລ້ວ, ຈະໄດ້ເພີ່ມໃສ່ຕື່ມ 20 ຕູ້ ລວມທັງໝົດເປັນ 63 ຕູ້. ຜູ້ມີສິດລົງຄະແນນສຽງທຸກຄົນຈະໄດ້ຮັບການສະໜັບສະໜູນໃຫ້ນຳໃຊ້ຕູ້ປ່ອນບັດລົງຄະແນນສຽງເລືອກຕັ້ງ ເພື່ອສົ່ງບັດລົງຄະແນນສຽງເລືອກຕັ້ງຄືນ. ລາຍການໃໝ່ທີ່ຕັ້ງຂອງຕູ້ປ່ອນບັດລົງຄະແນນສຽງເລືອກຕັ້ງຈະມີຢູ່ໃນເວັບໄຊທ໌ ແລະ ສົ່ງທາງໄປສະນີໃຫ້ຜູ້ມີສິດລົງຄະແນນສຽງທຸກທ່ານພ້ອມດ້ວຍບັດລົງຄະແນນສຽງເລືອກຕັ້ງ. ນອກຈາກນັ້ນ,

ທີ່ຕັ້ງຂອງຕູ້ປ່ອນບັດລົງຄະແນນສຽງເລືອກຕັ້ງຍັງຈະຈັດໄວ້ໃນປຶ້ມຄູ່ມືຂໍ້ມູນກ່ຽວກັບຜູ້ມີສິດລົງຄະແນນສຽງຂອງເມືອງ.

E. ຊຸດເຄື່ອງມື VCA/ອຸປະກອນສື່ສານ: ຊຸດເຄື່ອງມື VCA ໄດ້ຮັບການປັບປຸງ ແລະ ລົງໄວ້ໃນເວັບໄຊທ໌. ການສົ່ງຂໍ້ມູນອື່ນໆຈະສືບຕໍ່ປັບປຸງຕາມທີ່ຕ້ອງການ.
ຜູ້ມີສິດເຂົ້າຮ່ວມລົງຄະແນນທີ່ໄດ້ຮັບການຈົດທະບຽນທຸກທ່ານຈະໄດ້ຮັບຈົດໝາຍທາງໄປສະນີສອງສະບັບກ່ຽວກັບຂັ້ນຕອນການປ່ອນບັດລົງຄະແນນສຽງເລືອກຕັ້ງ.
ການສົ່ງຈົດໝາຍທາງໄປສະນີຄັ້ງທຳອິດໄດ້ກຳນົດສົ່ງໃນຕົ້ນເດືອນສິງຫາ 2020 ແລະ
ການສົ່ງຈົດໝາຍທາງໄປສະນີຄັ້ງທີສອງຈະສົ່ງໃນອາທິດທີສາມຂອງເດືອນກັນຍາ 2020.

F. ການປະຊຸມຝຶກອົບຮົມສຳມະນາ: ອີງຕາມຄຳສັ່ງດ້ານບໍລິຫານຂອງເຈົ້າຄອງລັດ, ເລກທີ N-67-20, ການຝຶກອົບຮົມສຳມະນາເປັນສອງພາສາຈະໄດ້ຈັດຂຶ້ນໃນເດືອນສິງຫາ ແລະ ເດືອນກັນຍາ 2020 ໂດຍການໃຊ້ການປະຊຸມກັນທາງວິດີໂອ. PowerPoint
ໃໝ່ໄດ້ຮັບການປັບປຸງສຳລັບການປະຊຸມສຳມະນາເປັນສອງພາສາ ແລະ ກຳລັງແປຢູ່. PowerPoint ຈະມີຢູ່ໃນຊຸດເຄື່ອງມື. ແຕ່ລະກຸ່ມໄດ້ຮັບການສະໜັບສະໜູນໃຫ້ນຳໃຊ້ PowerPoint ເພື່ອຊ່ວຍສະມາຊິກຊຸມຊົນເຂົ້າໃຈກ່ຽວກັບຂັ້ນຕອນການປ່ອນບັດລົງຄະແນນສຽງເລືອກຕັ້ງ.

ອີງຕາມຄຳສັ່ງດ້ານບໍລິຫານຂອງເຈົ້າຄອງລັດ, ເລກທີ N-67-20,
ການປະຊຸມສຳມະນາສຳລັບຊຸມຊຸນຄົນພິການຍັງຈະໄດ້ຈັດຂຶ້ນໂດຍການໃຊ້ການປະຊຸມທາງວິດີໂອ. ວັນທີສຳລັບການຝຶກອົບຮົມສຳມະນານີ້ແມ່ນວັນທີ 24 ກັນຍາ 2020. ຄະນະກຳມະການ VAAC (ຄະນະກຳມະການໃຫ້ຄຳປຶກສ່າກ່ຽວການເຂົ້າເຖິງຂອງຜູ້ມີສິດລົງຄະແນນສຽງ) ແລະ
ອົງການຈັດຕັ້ງຕ່າງໆທີ່ເຮັດວຽກກັບຊຸມຊົນຄົນພິການຈະຕ້ອງໄດ້ຮັບການຊຸກຍູ້ໃຫ້ຈັດການຝຶກອົບຮົມສຳມະນານີ້ຄືນພາຍໃນອົງການຈັດຕັ້ງ.

G. ຄະນະກຳມະການ:
ທາງເມືອງຈະສືບຕໍ່ຈັດຕາຕາລາງກອງປະຊຸມທາງວິດີໂອໃຫ້ເປັນປົກກະຕິໃຫ້ແກ່ຄະນະກຳມະການ VAAC ແລະ ຄະນະກຳມະການ LAAC (ຄະນະກຳມະການໃຫ້ຄຳປຶກສາກ່ຽວກັບການເຂົ້າເຖິງດ້ານພາສາ) ໃຫ້ສອດຄ່ອງກັບຄຳສັ່ງດ້ານບໍລິຫານຂອງເຈົ້າຄອງລັດ, ເລກທີ N-67-20.

H. ການປ່ອນບັດລົງຄະແນນສຽງເລືອກຕັ້ງທາງໄປສະນີທີ່ສາມາດເຂົ້າເຖິງໄດ້ (RAVBM): ສະພາຜູ້ແທນ Bill 860, ລົງວັນທີ 18 ມິຖຸນາ 2020,

ສ້າງການປ່ອນບັດລົງຄະແນນສຽງເລືອກຕັ້ງທາງໄປສະນີທີ່ສາມາດເຂົ້າເຖິງໄດ້ໃຫ້ຜູ້ມີສິດລົງຄະແນນສຽງທຸກທ່ານທີ່ມີຄວາມປະສົງນໍາໃຊ້ບໍລິການນີ້ໃນການເລືອກຕັ້ງໃຫຍ່ທົ່ວລັດໃນເດືອນພະຈິກ 2020 ທີ່ຈະມາເຖິງນີ້. ການສົ່ງຂໍ້ມູນກ່ຽວກັບການນໍາໃຊ້ບໍລິການຂອງ RAVBM ຈະຕ້ອງໄດ້ປັບປຸງໃນເວັບໄຊທ໌, ສື່ທາງສັງຄົມ ແລະ ປຶ້ມຄູ່ມືກ່ຽວກັບຂໍ້ມູນກ່ຽວກັບຜູ້ມີສິດລົງຄະແນນສຽງຂອງເມືອງ.